ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

ສັນຕິພາບ ເອກະລາດ ປະຊາທິປະໄຕ ເອກະພາບ ວັດທະນະຖາວອນ

ປະທານປະເທດ

ເລກທີ 223 /ປປທ

ນະຄອນຫຼວງວຽງຈັນ, ວັນທີ 24 ພະຈິກ 2020

# ລັດຖະດຳລັດ
# ຂອງປະທານປະເທດ

## ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ

**ວ່າດ້ວຍ ການປະກາດໃຫ້ ສັດຕະຍາບັນແກ່ອະນຸສັນຍາ**

**ຖັງແຮເຂົ້າສຸກເສີນ ອາຊຽນ+3 ໄລຍະທີ II** ( Protocol to Amend the ASEAN plus Three Emergency Rice Reserve Agreement) **ສົກປີ 2018 ເຖິງ 2022.**

- ອີງຕາມ ລັດຖະທຳມະນູນ ແຫ່ງ ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ (ສະບັບປັບປຸງ ປີ 2015)ໝວດທີ VI ມາດຕາ 67 ຂໍ້ 14;
- ອີງຕາມ ກົດໝາຍວ່າດ້ວຍ ສົນທິສັນຍາ ແລະ ສັນຍາສາກົນ, ສະບັບເລກທີ 18/ສພຊ, ລົງວັນທີ 08 ພຶດສະພາ 2017, ມາດຕາ 44;
- ອີງຕາມ ໜັງສືສະເໜີ ຂອງຄະນະປະຈຳສະພາແຫ່ງຊາດ, ສະບັບເລກທີ 23/ຄປຈ, ລົງວັນທີ 28 ຕຸລາ 2020.

**ປະທານປະເທດ**

**ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ອອກລັດຖະດຳລັດ:**

ມາດຕາ 1 ປະກາດໃຫ້ສັດຕະຍາບັນແກ່ອະນຸສັນຍາ **ຖັງແຮເຂົ້າສຸກເສີນ ອາຊຽນ+3 ໄລຍະທີ II ( Protocol to Amend the ASEAN plus Three Emergency Rice Reserve Agreement) ສົກປີ 2018 ເຖິງ 2022.**

ມາດຕາ 2 ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ເຄົາລົບ ແລະ ປະຕິບັດອະນຸສັນຍາສະບັບນີ້. ມອບໃຫ້ກະຊວງການຕ່າງປະເທດ ແລະ ອົງການລັດທີ່ກ່ຽວຂ້ອງ ຈັດຕັ້ງປະຕິບັດ ຕາມກົດໝາຍ ແລະ ລະບຽບການ.

**ມາດຕາ 3** ລັດຖະດຳລັດສະບັບນີ້ ມີຜົນສັກສິດ ນັບແຕ່ວັນລົງລາຍເຊັນ ເປັນຕົ້ນໄປ.

**ປະທານປະເທດ ແຫ່ງ ສປປ ລາວ**

ສາທາລະນະລັດ ປະຊາທິປະໄຕ ປະຊາຊົນລາວ ປະທານປະເທດ

ບຸນຍັງ ວໍລະຈິດ